ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 483 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 06 ມິຖຸນາ 2011

# ຂໍ້ຕົກລົງ
## ກ່ຽວກັບການໂອນເງິນເຂົ້າ-ອອກ ປະເທດຂອງທະນາຄານທຸລະກິດ

- ອີງຕາມລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1: ການໂອນເງິນເຂົ້າຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຕ້ອງການໂອນເງິນຕາຕ່າງປະເທດທີ່ຝາກຢູ່ຕ່າງປະເທດເຂົ້າບັນຊີເງິນຝາກຂອງຕົນທີ່ຝາກຢູ່ກົມບໍລິການ ທະນາຄານແຫ່ງ ສປປ ລາວ ບໍ່ຕ້ອງຂໍອະນຸຍາດຈາກກົມນະໂຍບາຍເງິນຕາ ແຕ່ໃຫ້ກົມບໍລິການທະນາຄານ ລາຍງານໃຫ້ກົມນະໂຍບາຍເງິນຕາ ຮັບຊາບຫຼັງຈາກການໂອນທຸກຄັ້ງ.

**ມາດຕາ 2: ການໂອນເງິນອອກຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຕ້ອງການໂອນເງິນອອກນອກປະເທດ ຕ້ອງຂໍອະນຸຍາດຈາກ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ທຸກຄັ້ງ. ກົມນະໂຍບາຍເງິນຕາ ຕ້ອງຄົ້ນຄວ້າການອະນຸມັດໃຫ້ສໍາເລັດພາຍໃນ 1 ວັນ.

**ມາດຕາ 3: ການນໍາເງິນສົດເຂົ້າ-ອອກ**

ການນໍາເງິນສົດເຂົ້າ-ອອກ ສປປ ລາວ ແມ່ນໃຫ້ປະຕິບັດຄືດັ່ງທີ່ຜ່ານມາ, ໂດຍມາຂໍອະນຸຍາດຈາກກົມນະໂຍບາຍເງິນຕາທຸກຄັ້ງ.

ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເຢ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

**ມາດຕາ 4: ຄ່າບໍລິການໂອນເງິນ**

ຄ່າບໍລິການໂອນເງິນເຂົ້າ-ອອກ ແມ່ນໃຫ້ປະຕິບັດຕາມແຈ້ງທີ່ກົມບໍລິການ ທະນາຄານແຫ່ງ ສປປ ລາວ ປະກາດອອກໃນແຕ່ລະໄລຍະ.

**ມາດຕາ 5: ການຈັດຕັ້ງປະຕິບັດ**

ໃຫ້ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ, ກົມຄຸ້ມຄອງທະນາຄານທຸລະກິດ, ບັນດາທະນາຄານທຸລະກິດ ແລະສະຖາບັນການເງິນ ພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ໃຫ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ຊຶ່ງຂໍ້ຕົກລົງສະບັບນີ້ຈະໄດ້ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 517 /ທຫລ, ລົງວັນທີ 09 ກໍລະກົດ 2009 .

ຂໍ້ຕົກລົງ, ບົດແນະນໍາ ແລະ ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ມາດຕາ 6: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ພູເພັດ **ຄໍາພູນວົງ**